ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພາຍໃນ

ເລກທີ 118 /ພນ

ນະຄອນຫຼວງວຽງຈັນ, ວັນທີ 24 ເມສາ 2023

# ແຈ້ງການ

ເຖິງ: - ບັນດາກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງວຽງຈັນ

- ບັນດາສະມາຄົມ, ມູນນິທິ ໃນຂອບເຂດທົ່ວປະເທດ

ທີ່ນັບຖື.

ເລື່ອງ: ການນຳໃຊ້ຕາປະທັບ ແລະ ສີນ້ຳມຶກ ຂອງອົງການຈັດຕັ້ງສັງຄົມ.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງພາຍໃນ, ສະບັບເລກທີ 575/ນຍ, ລົງວັນທີ 28 ກັນຍາ 2021;
- ອີງຕາມ ດຳລັດວ່າດ້ວຍ ຕາປະທັບ ສະບັບເລກທີ 322/ລບ, ລົງວັນທີ 01 ຕຸລາ 2018;
- ອີງຕາມ ຄຳແນະນຳ ກ່ຽວກັບການຜັນຂະຫຍາຍດຳລັດ ວ່າດ້ວຍຕາປະທັບ ສະບັບເລກທີ 08/ພນ, ລົງວັນທີ 16 ສິງຫາ 2021.

ກະຊວງພາຍໃນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ພາຍຫຼັງທີ່ລັດຖະບານໄດ້ອອກດຳລັດວ່າດ້ວຍ ຕາປະທັບ ສະບັບເລກທີ 322/ລບ, ລົງວັນທີ 01 ຕຸລາ 2018 ແລະ ກະຊວງພາຍໃນ ໄດ້ອອກຄຳແນະນຳ ກ່ຽວກັບການຜັນຂະຫຍາຍການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍຕາປະທັບ ສະບັບເລກທີ 08/ພນ, ລົງວັນທີ 16 ສິງຫາ 2021 ເພື່ອໃຫ້ອົງການຈັດຕັ້ງຂອງລັດຖະບານ, ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງອື່ນໆ ເປັນບ່ອນອີງໃນການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຂອງຕົນ. ເຖິງຢ່າງໃດກໍຕາມໄລຍະຜ່ານມາຍັງມີ ສະມາຄົມ ແລະ ມູນນິທິຈຳນວນໜຶ່ງ ທີ່ໄດ້ຮັບການສ້າງຕັ້ງ ແລະ ຄຸ້ມຄອງພາຍໃຕ້ ດຳລັດວ່າດ້ວຍສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017 ແລະ ມູນນິທິ ສະບັບເລກທີ 149/ນຍ, ລົງວັນທີ 19 ພຶດສະພາ 2011 ຍັງບໍ່ທັນມີຄວາມເຂົ້າໃຈເປັນເອກະພາບ ກ່ຽວກັບການນຳໃຊ້ຮູບແບບຕາປະທັບ ແລະ ສີນ້ຳມຶກ ຂອງຕົນ, ເຮັດໃຫ້ເກີດມີທາງສຽງຈົ່ມວ່າ, ເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ ແລະ ບໍ່ເປັນລະບຽບຮຽບຮ້ອຍ.

ສະນັ້ນ, ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດດຳລັດວ່າດ້ວຍ ຕາປະທັບ ສະບັບເລກທີ 322/ລບ, ລົງວັນທີ 01 ຕຸລາ 2018 ໃຫ້ຖືກຕ້ອງ ແລະ ມີຄວາມເປັນເອກະພາບ, ກະຊວງພາຍໃນ ຈຶ່ງອອກແຈ້ງການເພື່ອ ໃຫ້ປະຕິບັດດັ່ງນີ້:

1. ໃຫ້ບັນດາກະຊວງ, ອົງການ ແລະ ບັນດາແຂວງ, ນະຄອນຫຼວງວຽງຈັນ ຊຸກຍູ້ ແລະ ແນະນຳບັນດາສະມາຄົມ, ມູນນິທິ ທີ່ຢູ່ໃນການຄຸ້ມຄອງຂອງຕົນໃຫ້ນຳໃຊ້ຕາປະທັບ ແລະ ສີນ້ຳມຶກຕາມດຳລັດວ່າດ້ວຍຕາປະທັບກຳນົດໄວ້;
2. ໃຫ້ທຸກໆສະມາຄົມ, ມູນນິທິນຳໃຊ້ ຕາປະທັບຮູບແບບຕາມົນ ແລະ ນ້ຳມຶກສີຟ້າ ຕາມທີ່ກຳນົດໃນມາດຕາ 6 ແລະ ມາດຕາ 7 ຂອງດຳລັດວ່າດ້ວຍຕາປະທັບ;
3. ກະຊວງພາຍໃນ ຈະບໍ່ຮັບພິຈາລະນາເອກະສານຂອງສະມາຄົມ, ມູນນິທິ ທີ່ນຳໃຊ້ຮູບແບບຕາປະທັບ ແລະ ສີນ້ຳມຶກທີ່ບໍ່ຖືກຕ້ອງຕາມລະບຽບການກຳນົດ;
4. ຖ້າສະມາຄົມ, ມູນນິທິໃດຫາກລະເມີດການນຳໃຊ້ຮູບແບບຕາປະທັບ ແລະ ສີນ້ຳມຶກທີ່ກຳນົດໄວ້ໃນດຳລັດດັ່ງກ່າວຈະຖືກກ່າວເຕືອນ ແລະ ຖ້າຍັງສືບຕໍ່ລະເມີດກໍອາດຈະຖືກໂຈະການເຄື່ອນໄຫວຊົ່ວຄາວ ຫຼື ປະຕິບັດມາດຕະການອື່ນໆ ຕາມລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຂ້າງເທິງນີ້ດ້ວຍ.

ລັດຖະມົນຕີ

ປອ. ທອງຈັນ ມະນີໄຊ